ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR










## Ministry of Education and Sports and Australia advocate for women's empowerment and child protection on International Women's Day 2024.

## Media Report
**(23 Feb – 08 Apr 2024)**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ອົງການ USAID
Basic Education Quality and Access in Lao PDR is managed by Tetra Tech International Development,
on behalf of the Australian Government and the United States Agency for International Development (USAID).

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2024-03-07 | Newspaper | Pathedlao | Front and page 4 |
| 2024-03-07 | Newspaper | Vientiane Times | Page 4 |
| 2024-03-11 | Newspaper | Pasaxon | Page 3 |
| 2024-03-11 | Newspaper | Vientiane Mai | Page 8 |
| 2024-03-11 | Newspaper | Public and Security | Page 2 |
| 2024-03-13 | Newspaper | Army | Page 6 |
| 2024-03-13 | Newspaper | Economic and Commerce | Page 3 |
| 2024-03-06 | Social media | Vientiane Mai Facebook | 24K Followers |
| 2024-03-06 | Social media | Pathedlao Facebook | 378K Followers |
| 2024-03-07 | Social media | Vientiane radio 105,50 Mhz Facebook | 59K Followers |
| 2024-03-07 | Social media | Pasaxon Facebook | 25K Followers |
| 2024-03-07 | Social media | Edu-Sport TV Online Facebook | 65K Followers |
| 2024-03-07 | Social media | Edu-Sport TV Online Youtube | 1K Subscribers |
| 2024-03-07 | Social media | Lao PSTV Facebook | 228K Followers |
| 2024-03-09 | Social media | VTE 9 Facebook | 567K Followers |
| 2024-03-10 | Social media | Australia in Laos Facebook | 47K Followers |
| 2024-03-12 | Social media | Lao Star TV Facebook | 971K Followers |
| 2024-03-12 | Social media | Edu-Sport daily news Facebook | 7.8K Followers |
| 2024-03-13 | Social media | Lao National Television-English Program | 60K Followers |
| 2024-03-15 | Social media | Information and Media Center Facebook | 11K Followers |
| 2024-04-08 | Social media | Tetra Tech International Development Services LinkedIn | 64K Followers |
| 2024-04-08 | Social media | Tetra Tech International Development Services Facebook | 35K Followers |
| 2024-03-06 | Website | Vientiane Mai | |
| 2024-03-07 | Website | KPL English | Read article in English here |
| 2024-03-07 | Website | KPL Lao | Read article in Lao here |
| 2024-03-07 | Website | Pasaxon | Read article In Lao here |
| 2024-03-10 | Website | BEQUAL | Read article In English here |
| 2024-03-12 | Website | Education news | Read article In Lao here |
| 2024-03-07 | TV | Lao ESTV | Watch the news here |
| 2024-03-07 | TV | Lao PSTV | Watch the news here |
| 2024-03-09 | TV | VTE 9 | Watch the news here |
| 2024-03-12 | TV | Lao Star TV | Watch the news here |
| 2024-03-13 | TV | Lao National Television – English Program | Watch the news here |

| | | | |
|---|---|---|---|
| 2024-03-07 | Radio | Army Radio FM 99.7 | |
| 2024-03-07 | Radio | Public Security Radio FM 101.5 | |
| 2024-03-07 | Radio | Vientiane Radio FM 105.5 | |
| 2024-03-07 | Radio | Lao Youth FM 90.00 MHZ | |
| 2024-03-07 | Radio | Lao National Radio FM 103.7 | |
| 2024-03-09 | Radio | Education news FM 103.7 MHZ | |
| 2024-03-12 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 660 members |
| 2024-03-12 | WhatsApp | PESS-DESB | 18 Provincial groups 452 members |
| 2024-03-12 | WhatsApp | ETSP | 3 groups with ethnic teachers 98 members |
| 2024-03-12 | WhatsApp | Pre-Service Writing team | 8 TTCs and 2 universities 72 members |
| 2024-03-12 | WhatsApp | Target DESB | Teacher Dev Units in 30 target districts 64 members |
| 2024-03-12 | WhatsApp | Target TTC | Key coordinators from the 3 target TTCs 17 members |

## Pictures of articles in the media

| 2024-03-07 | Newspaper | Vientiane Times | Page 4 |
|---|---|---|---|



Officials from the Ministry of Education and Sports join representatives of the Australian government's support project, Basic Education Quality and Access in Laos (BEQUAL) programme, National University of Laos lecturers, teachers and student-teachers from Dongkhamxang Teacher Training College, Village Education Development Committees and other related partners at a workshop at the Teacher Training College on Wednesday. The workshop, titled "Awareness raising on child protection and safeguarding and supporting women's advancement in the education sector", was led by the Division for the Advancement of Women, Mothers and Children under the Ministry of Education and Sports. Student-teachers and lecturers from the Dongkhamxang Teacher Training College discussed opportunities to boost women's empowerment in the education sector.

| 2024-03-11 | Newspaper | Pasaxon | Page 3 |
|---|---|---|---|



ປະຊາຊົນ ວັນທີ 11 - 3 - 2024 ໜ້າ 3

**ສສກ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ການປົກປ້ອງເດັກ ໃນຂະແໜງສຶກສາ**

| | | | |
|---|---|---|---|
| 2024-03-11 | Newspaper | Vientiane Mai | Page 8 |

## ປູກຈິດສຳນຶກວຽກງານສ້າງຄວາມ ເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ



● ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ຈັດກິດຈະກຳປູກຈິດສຳນຶກໃຫ້ວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ແລະ ສະເຫຼີມສະຫຼອງວັນແມ່ຍິງສາກົນ 2024 ຂຶ້ນວັນທີ 6 ມີນາ 2024 ຢູ່ວິທະຍາໄລຄູດົງຄຳຊ້າງ ໂດຍມີທ່ານ ປອ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີກະຊວງ ສສກ ທ່ານ ນາງ ອາເນັດຊາ ເລັກກາທີ ເລຂາເອກສະຖານທູດອົດສະຕຣາລີ ພ້ອມດ້ວຍຕາງໜ້າກົມກະຊວງ ສສກ ນັກສຶກສາວິທະຍາໄລດັ່ງກ່າວ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານ ປອ ນາງ ສີສຸກ ວົງວິຈິດ ກ່າວວ່າ: ຫົວຂໍ້ໂຄສະນາສຳລັບງານວັນແມ່ຍິງສາກົນໃນປີນີ້ ແມ່ນ "Inspire Inclusion" ຫຼື "ສົ່ງເສີມການມີສ່ວນຮ່ວມ" ເພື່ອພວກເຮົາສົ່ງເສີມໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ ນີ້ແມ່ນການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ບັນດາທ່ານແມ່ນຄູຜູ້ສິດສອນ ແລະ ອີກບໍ່ດົນຈະເປັນຄູ-ອາຈານໃນອະນາຄົດຂອງຊາດ ຫວັງວ່າການກອງປະຊຸມຄັ້ງນີ້ຈະເປັນໂອກາດທີ່ດີ ທີ່ສ້າງແຮງບັນດານໃຈໃຫ້ຕົວທ່ານ ເພື່ອສ້າງຄວາມສະເໝີພາບ ແລະ ຂັບເຄື່ອນແນວຄວາມຄິດນີ້ ເຂົ້າໃນການຈັດຕັ້ງປະຕິບັດວຽກງານສອນຂອງທ່ານໃນປັດຈຸບັນ ແລະ ໃນອະນາຄົດ.

ທ່ານນາງ ອາເນັດຊາ ກ່າວວ່າ: ວັນແມ່ຍິງສາກົນໄດ້ໃຫ້ໂອກາດໃຫ້ພວກເຮົາເອົາເຖິງສິ່ງທີ່ຫຍຸ້ງຍາກຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກ ເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ ອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນກະຊວງ ສສກ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ ຄຳໝັ້ນສັນຍາຂອງອົດສະຕຣາລີ ຕໍ່ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການສຶກສາຮອບດ້ານຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານອັນຍາວນານຂອງພວກເຮົາກັບລັດຖະບານລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນເຂົ້າເຖິງການສຶກສາຂັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນພາຍແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ ແຜນງານບີຄວາ (BEQUAL) ເປັນແຜນງານທີ່ລັດຖະບານລາວກຳລັງດຳເນີນ ພາຍໃຕ້ການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດອາເມລິກາ (USAID).

| | | | |
|---|---|---|---|
| 2024-03-07 | Newspaper | Pathedlao | Front and page 4 |

ຂປລ. ທະນາຄານແຫ່ງ ສປປ ລາວ ຮ່ວມກັບອົງການກອງທຶນການເງິນສາກົນ (IFC) ໄດ້ຈັດກອງປະຊຸມສຳມະນາລະດັບພາກພື້ນຂື້ນໃນ ວັນທີ 6 ມີນາ 2024 ໃນຫົວຂໍ້ "ການສົ່ງເສີມການເງິນສີຂຽວໃນອາຊຽນ", ພາຍໃຕ້ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນດ້ານການ

☛ ອ່ານຕໍ່ໜ້າ 2

## ເດສຳຄັນໃນພາລະກິດ ພັດທະນາປະເທດຊາດ

## ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ການປົກປ້ອງເດັກໃນຂະແໜງສຶກສາ

☛ ອ່ານຕໍ່ໜ້າ 4

| | | | |
|---|---|---|---|
| 2024-03-11 | Newspaper | Public and Security | Page 2 |



ວັນຈັນ 11 ມີນາ 2024 — ຂ່າວທົ່ວໄປ

# ປູກຈິດສຳນຶກສ້າງຄວາມເຂັ້ມແຂງຂອງແມ່ຍິງ-ປົກປ້ອງເດັກ

| | | | |
|---|---|---|---|
| 2024-03-13 | Newspaper | Army | Page 6 |



# ປູກຈິດສຳນຶກກ່ຽວກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ

❖ ໃນວັນທີ 6 ມີນາ 2024, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ສະຖານທູດອົດສະຕຣາລີ ປະຈຳ

# ວິທະຍາໄລຄູດົງຄຳຊ້າງ ສະເຫຼີມສະຫຼອງວັນແມ່ຍິງສາກົນ 2024

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕາລີ ຈັດກິດຈະກຳເພື່ອປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນພິທີສະເຫຼີມສະຫຼອງ ວັນແມ່ຍິງສາກົນ 2024 ໃນວັນທີ 6 ມີນາ 2024 ທີ່ວິທະຍາໄລຄູດົງຄຳຊ້າງ ໂດຍການເປັນປະທານຂອງທ່ານ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ທ່ານນາງ ອາເນັດຊ້າ ເຮັກກາທີ ເລຂາເອກສະຖານທູດອົດສະຕາລີ ປະຈຳລາວ, ມີຄູ-ອາຈານ ແລະ ນັກສຶກສາຈາກວິທະຍາໄລສ້າງຄູດົງຄຳຊ້າງ ເຂົ້າຮ່ວມ.

ທ່ານ ນາງ ສີສຸກ ວົງວິຈິດ ກ່າວວ່າ "ຫົວຂໍ້ໂຄສະນາສຳລັບງານວັນແມ່ຍິງສາກົນ ໃນປີນີ້ແມ່ນ "Inspire Inclusion" ຫຼື "ສົ່ງເສີມການມີສ່ວນຮ່ວມ". ເມື່ອພວກເຮົາສົ່ງເສີມໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ, ນີ້ຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ.

ບັນດາທ່ານ ແມ່ນຄູຜູ້ສິດສອນ ແລະ ທ່ານຄືຜູ້ທີ່ຈະເປັນຄູ-ອາຈານໃນອະນາຄົດຂອງຊາດ. ຂ້າພະເຈົ້າຫວັງວ່າ ກອງປະຊຸມສຳມະນາຄັ້ງນີ້ຈະເປັນອີກເວທີໜຶ່ງທີ່ສ້າງແຮງບັນດານໃຈໃຫ້ກັບຄືທ່ານ ເພື່ອສ້າງຄວາມສະເໝີພາບ ແລະ ຜັນຂະຫຍາຍແນວຄວາມຄິດນີ້ ເຂົ້າໃນການຈັດຕັ້ງປະຕິບັດວຽກງານສອນຂອງທ່ານໃນປັດຈຸບັນ ແລະ ໃນຕໍ່ໜ້າ."

ທ່ານ ນາງ ອາແນັດຊ້າ ກ່າວຕື່ມວ່າ: "ວັນແມ່ຍິງສາກົນໄດ້ໃຫ້ໂອກາດໃຫ້ພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ. ອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາຂອງອົດສະຕຣາລີຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານອັນຍາວນານຂອງພວກເຮົາກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນເຂົ້າເຖິງການສຶກສາຂັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ."

ຫຼັງຈາກນັ້ນໃນພິທີ ໄດ້ມີເວທີສົນທະນາທາງວິຊາການ ໃນຫົວຂໍ້ "ການຊຸກຍູ້ຄວາມສະເໝີພາບຍິງ-ຊາຍ ແລະ ການສະໜັບສະໜູນຄວາມກ້າວໜ້າຂອງແມ່ຍິງ". ແຂກຖືກເຊີນເຂົ້າຮ່ວມໃນການສົນທະນາຄັ້ງນີ້ ມີຈຳນວນ 6 ທ່ານ ເຊິ່ງໄດ້ໃຫ້ກຽດແລກປ່ຽນປະສົບການ ແລະ ຄວາມຮູ້ກ່ຽວກັບວຽກງານການສ້າງຄວາມເຂັ້ມແຂງ ແລະ ການສ້າງຄວາມສະເໝີພາບຍິງ-ຊາຍໃນສັງຄົມ.

| 2024-03-06 | Vientiane Mai Facebook |
|---|---|

**Vientiane Mai**
March 6 at 2:58 PM ·

ປູກຈິດສຳນຶກວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ

..............................................................................

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕາລີ ຈັດກິດຈະກຳເພື່ອປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນພິທີສະເຫຼີມສະຫຼອງ ວັນແມ່ຍິງສາກົນ 2024 ໃນວັນທີ 6 ມີນາ 2024 ທີ່ວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ ໂດຍການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ແຜນງານບີຄວາ (BEQUAL) ພາຍໃຕ້ຫົວຂໍ້ "ການປູກຈິດສຳນຶກກ່ຽວກັບການປົກປ້ອງເດັກ ການສ້າງຄວາມປອດໄພ ແລະ ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໃນຂະແໜງການສຶກສາ" ເປັນປະທານຮ່ວມ ໂດຍທ່ານ ປອ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານນາງ ອາເນັດຊ້າ ເຮັກກາທົ້ ເລຂາເອກ ສະຖານທູດອົດສະຕາລີ ມີທ່ານຜູ້ຕາງໜ້າຈາກກະຊວງສຶກສາທິການ ມະຫາວິທະຍາໄລແຫ່ງຊາດ ແຂກ ຖືກເຊີນ ພະນັກງານຄູ-ອາຈານ ແລະ ນັກສຶກສາ ຈາກວິທະຍາໄລຄູດົງຄຳຊ້າງ ເຂົ້າຮ່ວມ.
#ກົດອ່ານຂໍ້ມູນເພີ່ມຕື່ມ👇
https://v2.vientianemai.net/archives/61384
#Vientiane Mai
Bounmy Sivilay




Corinne Javary and 4 others

| 2024-03-06 | Pathedlao Facebook |
|---|---|

**ປະເທດລາວ Pathedlao**
4d ·

ສ້າງຄວາມເຂັ້ມແຂງ ໃຫ້ແມ່ຍິງ ແລະ ການ
ປົກປ້ອງເດັກ ໃນຂະແໜງສຶກສາ

ຂປລ. ໃນວັນທີ 6 ມີນາ 2024, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ(ແຜນງານບີຄວາ) ໄດ້ຈັດກິດຈະກຳ ການສົນທະນາວິຊາການກ່ຽວກັບໂອກາດ ເພື່ອປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນຂະແໜງການສຶກສາ ເພື່ອສະເຫຼີມສະຫຼອງ ວັນແມ່ຍິງສາກົນ ຄົບຮອບ 114 ປີ ທີ່ວິທະຍາໄລສ້າງຄູດົງຄຳຊ້າງ, ນະຄອນຫຼວງວຽງຈັນ. ແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ເພື່ອປູກຈິດສຳນຶກຕໍ່ກັບວຽກງານເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ.
ທ່ານ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ກ່າວວ່າ: ຫົວຂໍ້ໂຄສະນາ ສຳລັບວັນແມ່ຍິງສາກົນ ໃນປີ 2024 ນີ້ແມ່ນ "ຈົ່ງພ້ອມກັນສ້າງແຮງບັນດານໃຈ ເພື່ອຄວາມສະເໝີພາບ". ເມື່ອພວກເຮົາສ້າງແຮງບັນດານໃຈໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ, ນັ້ນຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ເຊິ່ງຈຸດປະສົງຂອງການສຳມະນາມື້ນີ້ ແມ່ນແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈຕໍ່ກັບວຽກງານ ເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ,ຫວັງວ່າ ການສຳມະນາຄັ້ງນີ້ ຈະເປັນອີກເວທີໜຶ່ງ ທີ່ເປີດໂອກາດໃນການແລກປ່ຽນບົດຮຽນຮ່ວມກັນ, ພ້ອມທັງເປັນການສ້າງແຮງບັນດານໃຈ ໃຫ້ຄູໃນວິທະຍາໄລສ້າງຄູດົງຄຳຊ້າງ ແລະ ຜູ້ເຂົ້າຮ່ວມເພື່ອຊ່ວຍພັນຂະຫຍາຍແນວຄວາມຄິດນີ້ ເຂົ້າໃນການຈັດຕັ້ງປະຕິບັດວຽກງານສິດສອນ ຢູ່ພາຍໃນໂຮງຮຽນ ໃນປັດຈຸບັນ ແລະ ໃນຕໍ່ໜ້າ, ລວມທັງນັກສຶກສາຄູທຸກຄົນ ຜູ້ທີ່ຈະເປັນຄູໃນອະນາຄົດ. ພ້ອມທັງເຊື່ອໝັ້ນບັນຫາກ່ຽວກັບບົດບາດຍິງ-ຊາຍ ຢູ່ໃນສັງຄົມລາວ ເວົ້າລວມ, ເວົ້າສະເພາະ ກໍແມ່ນຢູ່ໃນຂະແໜງການສຶກສາ ແລະ ກິລາ ຈະຫຼຸດລົງ ຖ້າຫາກທຸກຄົນຮ່ວມມືກັນ ແລະ ຈົ່ງພ້ອມກັນສ້າງຄວາມເຂັ້ມແຂງ ໃຫ້ແກ່ແມ່ຍິງ ແລະ ເດັກ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບ ສຳລັບຄົນລຸ້ນຕໍ່ໄປໃນອະນາຄົດ.
ທ່ານ ນາງ ອາເນັດຊາ ເຮັກກາທີ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ກ່າວວ່າ: ວັນແມ່ຍິງສາກົນ ໄດ້ໃຫ້ໂອກາດພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງ ຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງ ໃນທາງບວກເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ. ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນ ກະຊວງສຶກສາ ທິການ ແລະ ກິລາ ເພື່ອຍົກລະດັບຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາ ຂອງອົດສະຕຣາລີ ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານ ອັນຍາວນານຂອງພວກເຮົາກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນ ເຂົ້າເຖິງການສຶກສາຊັ້ນປະຖົມ ທີ່ມີຄຸນນະ ພາບຢ່າງສະເໝີພາບ. ພ້ອມນີ້, ແມ່ຍິງ ແລະ ເດັກຍິງ ໂດຍສະເພາະກຸ່ມທີ່ຄົນດ້ອຍໂອກາດ ຍັງຄົງປະເຊີນໜ້າກັບສິ່ງກີດຂວາງໃນການກ້າວສູ່ບົດບາດຜູ້ນຳ. ການສຶກສາ ແລະ ຄູສອນ ມີບົດບາດອັນສຳຄັນໃນການຊຸກຍູ້ການເຂົ້າຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ.
ຄູ ມີບົດບາດສຳຄັນໃນການຮັບປະກັນການມີສ່ວນຮ່ວມຂອງເດັກທຸກຄົນ, ບໍ່ວ່າເພດ, ຊົນເຜົ່າ, ຫຼືຄວາມສາມາດຂອງເຂົາເຈົ້າ. ແຕ່ເພື່ອຮັບປະກັນການມີສ່ວນຮ່ວມນັ້ນ, ທຸກຄົນຍັງຕ້ອງການສະພາບແວດລ້ອມທີ່ປອດໄພສຳລັບຜູ້ຮຽນ ເຊິ່ງເອກະສານສຳລັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ໄດ້ອະທິບາຍກ່ຽວກັບການຮັບປະກັນໃຫ້ນັກຮຽນ, ເດັກຍິງ ແລະ ເດັກຊາຍທຸກຄົນ ສາມາດເຂົ້າເຖິງການສຶກສາ ໃນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີຄວາມປອດໄພໃນການຮຽນ. ນອກຈາກນີ້, ເອກະສານຍັງອະທິບາຍກ່ຽວກັບວິທີການປົກປ້ອງເດັກ ເຊັ່ນ: ສິ່ງທີ່ຄວນເຮັດ ແລະ ຂໍ້ຫ້າມ ໃນການເຄື່ອນໄຫວວຽກງານປົກປ້ອງເດັກ, ລວມທັງຂໍ້ແນະນຳໃນທາງປະຕິບັດ ສຳລັບຄູສອນ ເພື່ອຊ່ວຍສ້າງສິ່ງແວດລ້ອມທີ່ດີຂອງເດັກ.



9

| 2023-03-07 | Vientiane Radio Facebook |
|---|---|

**ວິທະຍຸ ນະຄອນຫຼວງວຽງຈັນ**

2d ·

#ຂ່າວ ປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ




ວິທະຍຸ ນະຄອນຫຼວງວຽງຈັນ and 3 others 1

| 2023-03-07 | Pasaxon Facebook |
|---|---|

**ປະຊາຊົນ**

March 7 at 3:07 PM ·

ສສກ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ການປົກປ້ອງເດັກ ໃນຂະແໜງສຶກສາ

.........

ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບສະຖານທູດອົສຕຣາລີ ປະຈຳ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ຈັດກິດຈະກຳການສົນທະນາວິຊາການກ່ຽວກັບໂອກາດ ເພື່ອປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກໃນຂະແໜງການສຶກສາ ເພື່ອສະເຫຼີມສະຫຼອງ ວັນແມ່ຍິງສາກົນ ຄົບຮອບ 114 ປີ (8 ມີນາ 1910-8 ມີນາ 2024) ຂຶ້ນໃນວັນທີ 6 ມີນາຜ່ານມາ ທີ່ວິທະຍາໄລສ້າງຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງ ສສກ ແລະ ນາງ ອາເບັດຊາ ເຣັກກາທີ ເລຂາເອກ ສະຖານທູດອົສຕຣາລີ ປະຈຳ ລາວ, ມີແມ່ຍິງ, ຄູ-ອາຈານ, ນັກສຶກສາ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ສີສຸກ ວົງວິຈິດ ກ່າວວ່າ: ຫົວຂໍ້ໂຄສະນາ ສຳລັບວັນແມ່ຍິງສາກົນ ໃນປີ 2024 ນີ້ ແມ່ນຈົ່ງພ້ອມກັນສ້າງແຮງບັນດານໃຈ ເພື່ອຄວາມສະເໝີພາບ. ເມື່ອພວກເຮົາສ້າງແຮງບັນດານໃຈໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ, ນັ້ນຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ຈຸດປະສົງຂອງການສຳມະນາໃນຄັ້ງນີ້, ແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈຕໍ່ກັບວຽກງານເພື່ອຄວາມສະເໝີ ພາບຍິງ-ຊາຍ ແລະ ວຽກງານແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ, ຫວັງວ່າ ເປັນອີກເວທີໜຶ່ງ ທີ່ເປີດໂອ ກາດໃນການແລກປ່ຽນບົດຮຽນຮ່ວມກັນ, ພ້ອມທັງເປັນການສ້າງແຮງບັນດານໃຈ ໃຫ້ຄູໃນວິທະຍາໄລສ້າງຄູດົງຄຳຊ້າງ ແລະ ຜູ້ເຂົ້າຮ່ວມ ເພື່ອຊ່ວຍຜັນຂະຫຍາຍແນວຄວາມຄິດນີ້ເຂົ້າໃນການຈັດຕັ້ງປະຕິ ບັດວຽກງານສິດສອນ ຢູ່ພາຍໃນໂຮງຮຽນໃນປັດຈຸບັນ ແລະ ໃນຕໍ່ໜ້າ, ລວມທັງນັກສຶກສາຄູທຸກຄົນ ຜູ້ທີ່ຈະເປັນຄູໃນອະນາຄົດ. ພ້ອມທັງເຊື່ອໝັ້ນບັນຫາກ່ຽວກັບບົດບາດຍິງ-ຊາຍ ຢູ່ໃນສັງຄົມລາວ ເວົ້າລວມ, ເວົ້າສະເພາະ ຢູ່ໃນຂະແໜງການສຶກສາ ແລະ ກິລາ ຈະຫຼຸດລົງ ຖ້າຫາກທຸກຄົນຮ່ວມມືກັນ ແລະ ຈົ່ງພ້ອມກັນສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບສຳລັບຄົນຮຸ່ນຕໍ່ໄປໃນອະນາຄົດ.

ທ່ານ ນາງ ອາເບັດຊາ ເຣັກກາທີ ກ່າວວ່າ: ວັນແມ່ຍິງສາກົນ ໄດ້ໃຫ້ໂອກາດພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງ ຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ. ລັດຖະບານ ອົສຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນ ກະຊວງ ສສກ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາ ຂອງ ອົສຕຣາລີ ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານ ອັນຍາວນານກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນ ເຂົ້າເຖິງການສຶກສາຊັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ. ພ້ອມນີ້, ແມ່ຍິງ ແລະ ເດັກຍິງ ໂດຍສະ ເພາະກຸ່ມຄົນດ້ອຍໂອກາດ ຍັງຄົງປະເຊີນໜ້າກັບສິ່ງກີດຂວາງໃນການກ້າວສູ່ບົດບາດຜູ້ນຳ. ການສຶກສາ ແລະ ຄູສອນມີບົດບາດອັນສຳຄັນໃນການຊຸກຍູ້ການເຂົ້າຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ ຍິງ.

ຄູມີບົດບາດສຳຄັນໃນການຮັບປະກັນການມີສ່ວນຮ່ວມຂອງເດັກທຸກຄົນ, ບໍ່ວ່າເພດ, ຊົນເຜົ່າ, ຫຼື ຄວາມສາມາດຂອງເຂົາເຈົ້າ. ແຕ່ເພື່ອຮັບປະກັນການມີສ່ວນຮ່ວມນັ້ນ, ທຸກຄົນຍັງຕ້ອງການສະ ພາບແວດລ້ອມທີ່ປອດໄພສຳລັບຜູ້ຮຽນ ຊຶ່ງເອກະສານສຳລັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ໄດ້ອະທິບາຍກ່ຽວກັບການຮັບປະກັນໃຫ້ນັກຮຽນ, ເດັກຍິງ ແລະ ເດັກຊາຍທຸກຄົນ ສາມາດເຂົ້າເຖິງການສຶກສາ ໃນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີຄວາມປອດໄພໃນການຮຽນ. ນອກຈາກນີ້, ເອກະສານຍັງອະທິບາຍກ່ຽວກັບວິທີການປົກປ້ອງເດັກ ເຊັ່ນ: ສິ່ງທີ່ຄວນເຮັດ ແລະ ຂໍ້ຫ້າມໃນການເຄື່ອນໄຫວວຽກງານປົກປ້ອງເດັກ, ລວມທັງຂໍ້ແນະນຳໃນທາງປະຕິບັດສຳລັບຄູສອນ ເພື່ອຊ່ວຍສ້າງສິ່ງແວດລ້ອມທີ່ດີຂອງເດັກ.

(ຂ່າວ: ວັນເພັງ, ພາບ: ບີຄວາ )







8 6

| 2023-03-07 | Edu-Sport TV Online Facebook, Youtube and TV |
|---|---|




| 2023-03-07 | Lao PSTV Facebook and TV |
|---|---|



| 2023-03-09 | VTE 9 Facebook and TV |
|---|---|




| 2024-03-10 | Australia in Laos Facebook |
|---|---|



| 2024-03-12 | Lao Star TV Facebook and TV |
|---|---|




| 2024-03-12 | Edu-Sport Daily News Facebook |
|---|---|



| 2024-03-13 | Lao National TV – English Program Facebook and TV |
|---|---|




| 2024-03-15 | Information and Media  Center (IMC) Facebook |
|---|---|



| 2024-04-08 | Tetra Tech International Development Services LinkedIn and Facebook |
|---|---|

Tetra Tech International Development
63,675 followers
4h •

The Ministry of Education and Sports of Laos and Australia teamed up for women's empowerment and child protection on International Women's Day last month.

...see more




7

Tetra Tech International Development Services
4h ·

The Ministry of Education and Sports of Laos and Australia teamed up for women's empowerment and child protection on International Women's Day last month.

To mark #IWD2024, the Ministry of Education and Sports of Laos and Australia, through #BEQUAL, managed by Tetra Tech International Development Services #IndoPacific, organised a workshop at Dongkhamxang Teacher Training College, titled "Awareness raising on child protection and safeguarding and supporting women's advancement in the education sector".

Participants discussed child protection, gender equality, and shared inspiring anecdotes. They brainstormed ways to foster inclusive, safe learning environments for all students.

Read more about the workshop: https://bequal-laos.org/.../ministry-of-education-and.../




4

1 share

| 2024-03-06 | Vientiane Mai Website |
|---|---|

ຂ່າວພົ້ນເດັ່ນ

# ປູກຈິດສຳນຶກວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ

06/03/2024 / BM sililay

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕາລີ ຈັດກິດຈະກຳເພື່ອປູກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນພິທີສະເຫຼີມສະຫຼອງ ວັນແມ່ຍິງສາກົນ 2024 ໃນວັນທີ 6 ມີນາ 2024 ທີ່ວິທະຍາໄລຄູ ດົງຄຳຊ້າງ ນະຄອນຫຼວງວຽງຈັນ ໂດຍການສະໜັບສະໜູນຂອງລັດຖະບານອົດສະຕາລີ ຜ່ານແຜນງານການເປັນຢູ່ດຸນບະລາຍ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ແຜນງານບີຄວາ (BEQUAL) ພາຍໃຕ້ຫົວຂໍ້ "ການປູກຈິດສຳນຶກກ່ຽວກັບການປົກປ້ອງເດັກ ການສ້າງຄວາມປອດໄພ ແລະ ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໃນຂະແໜງການສຶກສາ" ເປັນປະທານຮ່ວມ ໂດຍ ທ່ານ ປອ ບາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານນາງ ວາເນັດຊາ ເຣັກກາທີ ເລຂາເອກ ສະຖານທູດອົດສະຕາລີ ມີທ່ານຜູ້ຕາງໜ້າຈາກກະຊວງສຶກສາທິການ ມະຫາວິທະຍາໄລແຫ່ງຊາດ ແລະ ຄູຝຶກຊ້ອນ ພະນັກງານຄູ-ອາຈານ ແລະ ນັກສຶກສາ ຈາກວິທະຍາໄລຄູດົງຄຳຊ້າງ ເຂົ້າຮ່ວມ.



ທ່ານ ປອ ບາງ ສີສຸກ ວົງວິຈິດ ກ່າວວ່າ: ຫົວຂໍ້ໂຄສະນາສຳລັບງານວັນແມ່ຍິງສາກົນ ໃນປີນີ້ແມ່ນ "Inspire Inclusion" ຫຼື "ສົ່ງເສີມການມີສ່ວນຮ່ວມ" ເມື່ອພວກເຮົາສົ່ງເສີມໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ ນັ້ນຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ບັນດາທ່ານ ແມ່ນຄູຝຶກສອນ ແລະ ທ່ານທີ່ຈະເປັນຄູ-ອາຈານໃນອະນາຄົດຂອງຊາດ ຂ້າພະເຈົ້າຫວັງວ່າ ກອງປະຊຸມສຳມະນາຄັ້ງນີ້ຈະເປັນເວທີໜຶ່ງ ທີ່ສ້າງແຮງບັນດານໃຈໃຫ້ກັບທຸກທ່ານ ເພື່ອສ້າງຄວາມສະເໝີພາບ ແລະ ນຳຂະຫຍາຍແນວຄວາມຄິດນີ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສອນຂອງທ່ານ ໃນປັດຈຸບັນ ແລະ ໃນຕໍ່ໜ້າ ແລະ ຫວັງວ່າ ຈະໄດ້ເຫັນຄູສອນ ແລະ ນັກສຶກສາຄູທີ່ຈະເປັນຄູສອນໃນອະນາຄົດ ພ້ອມກັນເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດາເນື້ອໃນ ແລະ ຈິດໃຈຂອງວຽກງານການປົກປ້ອງເດັກ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການຮຽນຮ່ວມ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບສຳລັບທຸກຄົນຕໍ່ໄປ









ທ່ານ ນາງ ວາເນັດຊາ ກ່າວຕື່ມວ່າ "ວັນແມ່ຍິງສາກົນເປັນໂອກາດໃຫ້ພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ ອົດສະຕາລີ ພູມໃຈທີ່ໄດ້ສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາຂອງອົດສະຕາລີຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານອັນຍາວນານຂອງພວກເຮົາກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນເຂົ້າເຖິງການສຶກສາຂັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ." ແມ່ຍິງ ແລະ ເດັກຍິງ ໂດຍສະເພາະແມ່ນກຸ່ມທີ່ດ້ອຍໂອກາດ ຍັງຄົງປະເຊີນໜ້າກັບສິ່ງທ້າທາຍໃນການກ້າວສູ່ບົດບາດຜູ້ນຳ ການສຶກສາ ແລະ ຄູສອນ ມີບົດບາດອັນສຳຄັນໃນການຊຸກຍູ້ການເຂົ້າຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.



ກອງປະຊຸມດັ່ງກ່າວ ແມ່ນໄດ້ຖືກຈັດຂຶ້ນ ຕາມແຜນງານບີຄວາ (BEQUAL) ເປັນແຜນງານທີ່ລັດຖະບານລາວກຳລັງດຳເນີນ ພາຍໃຕ້ການສະໜັບສະໜູນຈາກລັດຖະບານອົດສະຕາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ (USAID).






ໜ້າທຳອິດ > EDUCATION

# MoES, Australia advocate for women's empowerment and child protection

07/03/2024 09:43 Email Print 374 Like Share

KPL (KPL) To celebrate International Women's Day (IWD), the Ministry of Education and Sports (MoES), with support from the Australian Government through the Basic Education Quality and Access in the Lao PDR (BEQUAL) program organised a half-day workshop at the Dongkhamxang Teacher Training College (TTC).



*Lecturers and teachers from Dongkhamxang Teacher Training College and National University of the Lao PDR attended the celebration*

(KPL) To celebrate International Women's Day (IWD), the Ministry of Education and Sports (MoES), with support from the Australian Government through the Basic Education Quality and Access in the Lao PDR (BEQUAL) program organised a half-day workshop at the Dongkhamxang Teacher Training College (TTC).



*The revised curriculum developped with support from Australia promote more gender equity and inclusion*

The workshop titled "Awareness raising on child protection and safeguarding and supporting women's advancement in the education sector" was opened by Ms Sisouk Vongvichit, Vice-Minister, MoES and Ms. Vanessa Hegarty, First Secretary, Australian Embassy. 330 guests from MoES, National University of the Lao PDR, lecturers, teachers and student-teachers from Dongkhamxang TTC, Village Education Development Committees and other related partners participated in the activities organised by the Gender Trainers team of the Ministry. The workshop was led by the Division for the Advancement of Women, Mothers and Children (MDAW) under the supervision of MoES Cabinet.




Ms Sisouk Vongvichit (R) and Ms Vanessa Hegart chaired the event to celebrate International Women's Day 2024

"The theme for International Women's Day this year is "Inspire Inclusion". When we inspire others to understand and value women's inclusion, we forge a better world. You are teachers and future teachers of the Lao PDR. I hope this workshop will inspire you to be inclusive in your current and future teaching practices," said Ms. Sisouk Vongvichit.

"I am looking forward to seeing how as teachers and future teachers, you will put into practice those messages of child protection, women's empowerment and inclusion, and build a more equitable and inclusive society for generations to come," Ms. Sisouk Vongvichit concluded.



*All speeches and presentations were translated in sign Language to be accessible for all*

"International Women's Day gives us an opportunity to talk about what remains to be done in our efforts to achieve gender equality and call for positive change for women's empowerment. Australia is proud to support the Ministry of Education and Sports to raise future teachers' awareness of the importance of women's advancement and child protection. Australia's commitment to gender equity and inclusive education in Laos underpins our long-standing partnership with the Government of the Lao PDR to achieve equal access for all children to quality primary education," Ms Hegarty added.



*Teachers play a critical role in ensuring inclusion of all children*

Teachers play a critical role in ensuring inclusion of all children, no matter their gender, ethnicity, or ability. But to ensure inclusion, you also need a safe environment for students. Workshop participants were therefore first introduced to the new Child Protection and Safeguarding brochure produced by MoES with support from Australia. They reflected on how they could ensure all students, girls and boys, can access education in an inclusive and safe environment that supports them to thrive. They discussed the Do's and Dont's of child protection and created posters on practical actions that should be followed by all teachers.

After that, they participated in a panel discussion on "promoting gender equality and supporting women's advancement". Six panelists shared their personal stories of empowerment and inclusion. Teachers and students shared their experience from attending the inclusive education specialisation subject and how they know understand that each student learn differently and have their own specific characteristics. They raised that the most important factor is the motivation and devotion of the teachers and their will to continue learning to constantly develop their teaching skills. Moreover, teachers invited to the event also shared their experience on their inclusive education practice, and how to create a safe zone to ensure all girls can access education fairly and equally.

Ms Vanmany Vannasy, Head of MDAW commented "Hearing those stories, we can see that by providing support and resources, women can be empowered to overcome obstacles and achieve their full potential."

ໜ້າທຳອິດ > ສຶກສາ-ກິລາ

# ສ້າງຄວາມເຂັ້ມແຂງ ໃຫ້ແມ່ຍິງ ແລະ ການ ປົກປ້ອງເດັກ ໃນ ຂະແໜງສຶກສາ

06/03/2024 16:15 Email | Print | 251 | Like Share

**ຂປລ ຂປລ. ໃນວັນທີ 6 ມີນາ 2024, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ**

0 Like Share



ຂປລ. ໃນວັນທີ 6 ມີນາ 2024, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ຈັດກິດຈະກຳ ການສົນທະນາວິຊາການກ່ຽວກັບໂອກາດ ເພື່ອປຸກຈິດສຳນຶກໃຫ້ກັບວຽກງານ ສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນຂະແໜງການສຶກສາ ເພື່ອສະເຫລີມ ສະຫລອງ ວັນແມ່ຍິງສາກົນ ຄົບຮອບ 114 ປີ ທີ່ວິທະຍາໄລສ້າງຄູດົງຄຳຊ້າງ, ນະຄອນຫລວງວຽງຈັນ. ແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ເພື່ອປຸກຈິດສຳນຶກຕໍ່ກັບ ວຽກງານເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ.



ທ່ານ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ກ່າວວ່າ: ຫົວຂໍ້ໂຄສະນາ ສຳລັບວັນແມ່ຍິງສາກົນ ໃນປີ 2024 ນີ້ແມ່ນ "ຈົ່ງພ້ອມກັນສ້າງແຮງບັນດານໃຈ ເພື່ອຄວາມສະເໝີພາບ". ເມື່ອພວກເຮົາສ້າງແຮງບັນດານໃຈ ໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ, ນັ້ນຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ເຊິ່ງຈຸດປະສົງຂອງການສຳມະນາມື້ນີ້ ແມ່ນແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈຕໍ່ກັບວຽກງານ ເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ,ຫວັງວ່າ ການສຳມະນາຄັ້ງນີ້ ຈະເປັນອີກເວທີໜຶ່ງ ທີ່ເປີດໂອກາດໃນການແລກປ່ຽນບົດຮຽນຮ່ວມກັນ, ພ້ອມທັງເປັນການສ້າງແຮງບັນດານໃຈ ໃຫ້ຄູໃນວິທະຍາໄລສ້າງຄູດົງຄຳຊ້າງ ແລະ ຜູ້ເຂົ້າຮ່ວມ ເພື່ອຊ່ວຍຜັນຂະຫຍາຍແນວຄວາມຄິດນີ້ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ສິດສອນ ຢູ່ພາຍໃນໂຮງຮຽນ ໃນປັດຈຸບັນ ແລະ ໃນຕໍ່ໜ້າ, ລວມທັງນັກສຶກສາຄູທຸກຄົນ ຜູ້ທີ່ຈະເປັນຄູໃນອະນາຄົດ. ພ້ອມທັງເຊື່ອໝັ້ນ ບັນຫາກ່ຽວກັບບົດບາດຍິງ-ຊາຍ ຢູ່ໃນສັງຄົມລາວ ເວົ້າລວມ, ເວົ້າສະເພາະ ກໍແມ່ນຢູ່ໃນຂະແໜງການສຶກສາ ແລະ ກິລາ ຈະຫລຸດລົງ ຖ້າຫາກທຸກຄົນຮ່ວມມືກັນ ແລະ ຈົ່ງພ້ອມກັນສ້າງຄວາມເຂັ້ມແຂງ ໃຫ້ແກ່ແມ່ຍິງ ແລະ ເດັກ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບ ສຳລັບຄົນລຸ້ນຕໍ່ໆໄປໃນອະນາຄົດ.



ທ່ານ ນາງ ວາເນັດສາ ເອັກກາທີ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ກ່າວວ່າ: ວັນແມ່ຍິງສາກົນ ໄດ້ໃຫ້ໂອກາດພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງ ຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງ ໃນທາງບວກ ເພື່ອສ້າງຄວາມເຂັ້ມ ແຂງຂອງແມ່ຍິງ. ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນ ກະຊວງສຶກສາ ທິການ ແລະ ກິລາ ເພື່ອຍົກສູງຄວາມຮັບຮູ້ຂອງຄູ ໃນອະນາຄົດ ກ່ຽວກັບຄວາມສຳຄັນ ຂອງຄວາມກ້າວໜ້າ ຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາ ຂອງອົດສະຕຣາລີ ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານ ອັນຍາວນານຂອງພວກເຮົາກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ ເດັກນ້ອຍທຸກຄົນ ເຂົ້າເຖິງການສຶກສາຂັ້ນປະຖົມ ທີ່ມີຄຸນນະພາບຢ່າງສະເໝີພາບ. ພ້ອມນີ້, ແມ່ຍິງ ແລະ ເດັກຍິງ ໂດຍສະເພາະກຸ່ມທີ່ຄົນດ້ອຍໂອກາດ ຍັງຄົງປະເຊີນໜ້າກັບສິ່ງກີດຂວາງ ໃນການກ້າວສູ່ບົດບາດຜູ້ນຳ. ການສຶກສາ ແລະ ຄູສອນ ມີບົດບາດອັນສຳຄັນ ໃນການຊຸກຍູ້ການເຂົ້າຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ.



ຄູ ມີບົດບາດສຳຄັນໃນການຮັບປະກັນການມີສ່ວນຮ່ວມຂອງເດັກທຸກຄົນ, ບໍ່ວ່າເພດ, ຊົນເຜົ່າ, ຫລື ຄວາມສາມາດຂອງເຂົາເຈົ້າ. ແຕ່ເພື່ອຮັບປະກັນການມີສ່ວນຮ່ວມນັ້ນ, ທຸກຄົນຍັງຕ້ອງການສະພາບ ແວດລ້ອມທີ່ປອດໄພສຳລັບຜູ້ຮຽນ ເຊິ່ງເອກະສານສຳລັບ ການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ໄດ້ອະທິບາຍກ່ຽວກັບການຮັບປະກັນໃຫ້ນັກຮຽນ, ເດັກຍິງ ແລະ ເດັກຊາຍທຸກຄົນ ສາມາດເຂົ້າເຖິງການສຶກສາໃນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີຄວາມປອດໄພ ໃນການຮຽນ. ນອກຈາກນີ້, ເອກະສານຍັງອະທິບາຍກ່ຽວກັບ ວິທີການປົກປ້ອງເດັກ ເຊັ່ນ: ສິ່ງທີ່ຄວນເຮັດ ແລະ ຂໍ້ຫ້າມ ໃນການເຄື່ອນໄຫວວຽກງານປົກປ້ອງເດັກ, ລວມທັງຂໍ້ແນະນຳໃນທາງປະຕິບັດ ສຳລັບຄູສອນ ເພື່ອຊ່ວຍສ້າງສິ່ງແວດລ້ອມທີ່ດີຂອງເດັກ.

| 2024-03-07 | Pasaxon Website |
|---|---|



ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບສະຖານທູດອົສຕຣາລີ ປະຈຳ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ(ແຜນງານບີຄວາ) ໄດ້ຈັດກິດຈະກຳການສົນທະນາວິຊາການກ່ຽວກັບໂອກາດ ເພື່ອປຸກຈິດສຳນຶກໃຫ້ກັບວຽກງານສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງເດັກ ໃນຂະແໜງການສຶກສາ ເພື່ອສະເຫຼີມສະຫຼອງ ວັນແມ່ຍິງສາກົນ ຄົບຮອບ 114 ປີ(8 ມີນາ 1910-8 ມີນາ 2024) ຂຶ້ນໃນວັນທີ 6 ມີນາຜ່ານມາ ທີ່ວິທະຍາໄລສ້າງຄູດົງຄຳຊ້າງນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງສີສຸກວົງວິຈິດ ຮອງລັດຖະມົນຕີກະຊວງສສກ ແລະ ນາງວາເນັດຊາເຮັກກາທີເລຂາເອກສະຖານທູດອົສຕຣາລີປະຈຳລາວ, ມີແມ່ຍິງ, ຄູ-ອາຈານ, ນັກສຶກສາ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ສີສຸກ ວົງວິຈິດ ກ່າວວ່າ: ຫົວຂໍ້ໂຄສະນາ ສຳລັບວັນແມ່ຍິງສາກົນ ໃນປີ 2024ນີ້ ແມ່ນຈົ່ງພ້ອມກັນສ້າງແຮງບັນດານໃຈ ເພື່ອຄວາມສະເໝີພາບ. ເມື່ອພວກເຮົາສ້າງແຮງບັນດານໃຈໃຫ້ຄົນອື່ນເຂົ້າໃຈ ແລະ ເຫັນຄຸນຄ່າໃນຄວາມສະເໝີພາບຂອງແມ່ຍິງ, ນັ້ນຄືການທີ່ພວກເຮົາກຳລັງສ້າງໂລກທີ່ດີກວ່າ ຈຸດປະສົງຂອງການສຳມະນາໃນຄັ້ງນີ້, ແນໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈຕໍ່ກັບວຽກງານເພື່ອຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ,ຫວັງວ່າເປັນອີກເວທີໜຶ່ງ ທີ່ເປີດໂອກາດໃນການແລກປ່ຽນບົດຮຽນຮ່ວມກັນ, ພ້ອມທັງເປັນການສ້າງແຮງບັນດານໃຈ ໃຫ້ຄູໃນວິທະຍາໄລສ້າງຄູດົງຄຳຊ້າງ ແລະ ຜູ້ເຂົ້າຮ່ວມ ເພື່ອຊ່ວຍຜັນຂະຫຍາຍແນວຄວາມຄິດນີ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສິດສອນ ຢູ່ພາຍໃນໂຮງຮຽນໃນປັດຈຸບັນ ແລະ ໃນຕໍ່ໜ້າ, ລວມທັງນັກສຶກສາຄູທຸກຄົນ ຜູ້ທີ່ຈະເປັນຄູໃນອະນາຄົດ. ພ້ອມທັງເຊື່ອໝັ້ນບັນຫາກ່ຽວກັບບົດບາດຍິງ-ຊາຍຢູ່ໃນສັງຄົມລາວ ເວົ້າລວມ, ເວົ້າສະເພາະ ຢູ່ໃນຂະແໜງການສຶກສາ ແລະ ກິລາ ຈະຫຼຸດລົງ ຖ້າຫາກທຸກຄົນຮ່ວມມືກັນ ແລະ ຈົ່ງພ້ອມກັນສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບສຳລັບຄົນຮຸ່ນຕໍ່ໆໄປໃນອະນາຄົດ.

ທ່ານ ນາງ ວາເນັດຊາ ເຮັກກາທີກ່າວວ່າ: ວັນແມ່ຍິງສາກົນ ໄດ້ໃຫ້ໂອກາດພວກເຮົາເວົ້າເຖິງສິ່ງທີ່ຍັງຄົງຄ້າງ ຢູ່ໃນຄວາມພະຍາຍາມຂອງພວກເຮົາ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ. ລັດຖະບານອົສຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນ ກະຊວງ ສສກ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາ ຂອງອົສຕຣາລີ ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນລາວ ພາຍໃຕ້ການເປັນຄູ່ຮ່ວມງານ ອັນຍາວນານກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນ ເຂົ້າເຖິງການສຶກສາຂັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ. ພ້ອມນີ້, ແມ່ຍິງ ແລະ ເດັກຍິງ ໂດຍສະເພາະກຸ່ມຄົນດ້ອຍໂອກາດ ຍັງຄົງປະເຊີນໜ້າກັບສິ່ງກີດຂວາງໃນການກ້າວສູ່ບົດບາດຜູ້ນຳ. ການສຶກສາ ແລະ ຄູສອນມີບົດບາດອັນສຳຄັນໃນການຊຸກຍູ້ການເຂົ້າຮ່ວມ ແລະສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ.

ຄູມີບົດບາດສຳຄັນໃນການຮັບປະກັນການມີສ່ວນຮ່ວມຂອງເດັກທຸກຄົນ, ບໍ່ວ່າເພດ, ຊົນເຜົ່າ, ຫຼື ຄວາມສາມາດຂອງເຂົາເຈົ້າ. ແຕ່ເພື່ອຮັບປະກັນການມີສ່ວນຮ່ວມນັ້ນ, ທຸກຄົນຍັງຕ້ອງການສະພາບແວດລ້ອມທີ່ປອດໄພສຳລັບຜູ້ຮຽນ ຊຶ່ງເອກະສານສຳລັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ໄດ້ອະທິບາຍກ່ຽວກັບການຮັບປະກັນໃຫ້ນັກຮຽນ, ເດັກຍິງ ແລະ ເດັກຊາຍທຸກຄົນ ສາມາດເຂົ້າເຖິງການສຶກສາ ໃນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ມີຄວາມປອດໄພໃນການຮຽນ. ນອກຈາກນີ້, ເອກະສານຍັງອະທິບາຍກ່ຽວກັບວິທີການປົກປ້ອງເດັກ ເຊັ່ນ: ສິ່ງທີ່ຄວນເຮັດ ແລະ ຂໍ້ຫ້າມໃນການເຄື່ອນໄຫວວຽກງານປົກປ້ອງເດັກ, ລວມທັງຂໍ້ແນະນຳໃນທາງປະຕິບັດສຳລັບຄູສອນ ເພື່ອຊ່ວຍສ້າງສິ່ງແວດລ້ອມທີ່ດີຂອງເດັກ.

(ຂ່າວ: ວັນເພັງ, ພາບ: ບີຄວາ )

| 2024-03-10 | BEQUAL Website |
|---|---|

**BEQUAL** | About us | Activities | Library | Opportunities | English

# Ministry of Education and Sports and Australia advocate for women's empowerment and child protection on International Women's Day 2024

POSTED ON 10 MARCH 2024




Ms. Vanessa Hegarty and Dr. Sisouk Vongvichit chaired the event to celebrate International Women's Day 2024

On the occasion of International Women's Day 2024, student-teachers and lecturers from the Dongkhamxang Teacher Training College discussed opportunities to boost women's empowerment in the education sector

To celebrate International Women's Day (IWD), the Ministry of Education and Sports of Lao PDR (MoES), with support from the Australian Government through the Basic Education Quality and Access in Lao PDR (BEQUAL) program organised a half-day workshop at the Dongkhamxang Teacher Training College (TTC). The workshop titled "Awareness raising on child protection and safeguarding and supporting women's advancement in the education sector" was opened by Dr. Sisouk Vongvichit, Vice-Minister, MoES and Ms. Vanessa Hegarty, First Secretary, Australian Embassy. 330 guests from MoES, National University of Lao PDR, lecturers, teachers and student-teachers from Dongkhamxang TTC, Village Education Development Committees and other related partners participated in the activities organised by the Gender Trainers team of the Ministry. The workshop was led by the Division for the Advancement of Women, Mothers and Children (MDAW) under the supervision of MoES Cabinet.


Lecturers and teachers from Dongkhamxang Teacher Training College and National University of Lao PDR attended the celebration

Dr. Sisouk Vongvichit said ***"The theme for International Women's Day this year is "Inspire Inclusion". When we inspire others to understand and value women's inclusion, we forge a better world. You are teachers and future teachers of Lao PDR. I hope this workshop will inspire you to be inclusive in your current and future teaching practices."***

Ms. Hegarty added ***"International Women's Day gives us an opportunity to talk about what remains to be done in our efforts to achieve gender equality and call for positive change for women's empowerment. Australia is proud to support the Ministry of Education and Sports to raise future teachers' awareness of the importance of women's advancement and child protection. Australia's commitment to gender equity and inclusive education in Laos underpins our long-standing partnership with the Government of Lao PDR to achieve equal access for all children to quality primary education."***

Teachers play a critical role in ensuring inclusion of all children, no matter their gender, ethnicity, or ability. But to ensure inclusion, you also need a safe environment for students. Workshop participants were therefore first introduced to the new Child Protection and Safeguarding brochure produced by MoES with support from Australia. They reflected on how they could ensure all students, girls and boys, can access education in an inclusive and safe environment that supports them to thrive. They discussed the Do's and Dont's of child protection and created posters on practical actions that should be followed by all teachers.


All speeches and presentations were translated in sign Language to be accessible for all


Teachers play a critical role in ensuring inclusion of all children

After that, they participated in a panel discussion on "promoting gender equality and supporting women's advancement". Six panelists shared their personal stories of empowerment and inclusion. Teachers and students shared their experience from attending the inclusive education specialisation subject and how they know understand that each student learn differently and have their own specific characteristics. They raised that the most important factor is the motivation and devotion of the teachers and their will to continue learning to constantly develop their teaching skills. Moreover, teachers invited to the event also shared their experience on their inclusive education practice, and how to create a safe zone to ensure all girls can access education fairly and equally.

Ms. Vanmany Vannasy, Head of MDAW commented ***"Hearing those stories, we can see that by providing support and resources, women can be empowered to overcome obstacles and achieve their full potential."***

Ms. Hegarty said ***"Women and girls, especially those experiencing disadvantage, continue to face barriers when seeking leadership roles. Education and teachers play a vital role in fostering inclusion and empowering women."***

Dr. Sisouk Vongvichit concluded ***"I am looking forward to seeing how as teachers and future teachers, you will put into practice those messages of child protection, women's empowerment and inclusion, and build a more equitable and inclusive society for generations to come."***

The workshop was organised through the BEQUAL program. BEQUAL is a program led by the Lao Government with support from the Australian Government and the United States Agency for International Development (USAID).



| 2024-03-12 | Education News Website |
|---|---|

ສຶກສາ, ວິທະຍາສາດ ແລະ ກິລາ

Education, Science and Sports Daily News

ການເມືອງ | ສຶກສາ | ວິທະຍາສາດ | ກິລາ | ຂ່າວທ້ອງຖິ່ນ | ເສດຖະກິດ-ສັງຄົມ | ໜັງສືພິມ

# ສສກ-ອົດສະຕຣາລີ ສະຫຼອງວັນແມ່ຍິງສາກົນ ຄົບຮອບ 114 ປີ

12/03/2024 | ສຶກສາ




ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ຈັດພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 114 ປີ (8 ມີນາ 1910-8 ມີນາ 2024) ພາຍໃຕ້ຫົວຂໍ້ "ສົ່ງເສີມການມີສ່ວນຮ່ວມ ລົງທຶນເລັ່ງໃສ່ຄວາມກ້າວໜ້າຂອງແມ່ຍິງ" ເມື່ອວັນທີ 7 ມີນາ 2023 ທີ່ຫ້ອງປະຊຸມວິທະຍາໄລສ້າງຄູດົງຄຳຊ້າງ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານ ປອ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ນາງ ອາເນັດຊ໋າ ເຮັກກາທີ້ ເລຂາເອກ, ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ, ພ້ອມດ້ວຍຕາງໜ້າແຜນງານບີຄວາ, ຄະນະຫ້ອງການ, ກົມ, ຄະນະບໍລິຫານງານສະຫະພັນແມ່ຍິງ, ຜູ້ອຳນວຍການ, ວິຊາການ, ພະນັກງານ, ນັກຮຽນ, ນັກສຶກສາຢ່າງພ້ອມພຽງ.







ໂອກາດດັ່ງກ່າວ, ທ່ານ ປອ ນາງ ສີສຸກ ວົງວິຈິດ ກ່າວວ່າ: ການຈັດພິທີໃນຄັ້ງນີ້, ແມ່ນແນ່ໃສ່ການສ້າງຂະບວນການແບບມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈຕໍ່ກັບວຽກງານ ເພື່ອຄວາມສະເໝີພາບ ຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ, ພ້ອມທັງຫວັງຢ່າງຍິ່ງວ່າ ກອງປະຊຸມສຳມະນາຄັ້ງນີ້ຈະເປັນອີກເວທີໜຶ່ງທີ່ເປີດໂອກາດໃນການແລກປ່ຽນບົດຮຽນຮ່ວມກັນ ພ້ອມທັງເປັນການສ້າງແຮງບັນດານໃຈໃຫ້ກັບທຸກທ່ານ ເພື່ອຊ່ວຍຜັນຂະຫຍາຍແນວຄວາມຄິດນີ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສິດສອນຂອງທຸກທ່ານໃນປັດຈຸບັນ ແລະ ໃນຕໍ່ໜ້າ, ລວມທັງນັກສຶກສາຄູທຸກຄົນ ຜູ້ທີ່ຈະເປັນຄູໃນອະນາຄົດ ແລະ ຫວັງວ່າ ຈະໄດ້ເຫັນຄູສອນ ແລະ ນັກສຶກສາຜູ້ທີ່ຈະເປັນຄູສອນໃນອະນາຄົດ ພ້ອມກັນເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດາເນື້ອໃນ ແລະ ຈິດໃຈຂອງວຽກງານການປົກປ້ອງເດັກ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການຮຽນຮ່ວມ ເພື່ອສ້າງສັງຄົມທີ່ມີຄວາມສະເໝີພາບສຳລັບຄົນລຸ້ນຕໍ່ໆໄປ.



### ຂ່າວຫຼ້າສຸດ

- ສສກ ປະກາດການແຕ່ງຕັ້ງ ຮອງລັດຖະມົນຕີ ຄົນໃໝ່ 13/03/2024
- ສະຖາບັນທຸລະກິດແສງສະຫວັນ ສຳເລັດການສ້າງບຸກຄະລາກອນອອກຮັບໃຊ້ສັງຄົມ ລະດັບ ປ.ຕີ ຮຸ່ນ 1 ແລະ ປ.ຕີຕໍ່ເນື່ອງ ຮຸ່ນ 3 ສົກ 2022-2023 13/03/2024
- ສສກ-ອົດສະຕຣາລີ ສະຫຼອງວັນແມ່ຍິງສາກົນ ຄົບຮອບ 114 ປີ 12/03/2024
- ສສກ ປິດບົ້ນແຂ່ງຂັນສ້າງຂະບວນການສະກັດກັ້ນ ແລະ ແກ້ໄຂບັນຫາປະເສບຕິດ ປີ 2023 ຂະແໜງການສຶກສາ-ກິລາ 12/03/2024
- ທ່ານ ນາງ ເພັດສະໝອນ ພົມມະໄຊສີ ວາງວິໄສທັດການຂາຍ ຊື້ສິດ-ບໍລິການອອງໄວ ໃສ່ໃຈຕໍ່ລູກຄ້າ 07/03/2024
- ຄະນະນຳກະຊວງ ສສກ ພົບປະແລກປ່ຽນບົດຮຽນການນຳໃຊ້ສະໜາມກິລາ ທີ່ປະເທດຍີ່ປຸ່ນ 07/03/2024

ຂະນະດຽວກັນນີ້, ທ່ານ ນາງ ວາເນັດຊ້າ ເຮັກກາທີ້ ກ່າວວ່າ: "ວັນແມ່ຍິງສາກົນໄດ້ໃຫ້ໂອກາດເວົ້າເຖິງສິ່ງທີ່ຍັງຄົງຄ້າງຢູ່ ເພື່ອບັນລຸຄວາມສະເໝີພາບທາງເພດ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງໃນທາງບວກ ເພື່ອສ້າງຄວາມເຂັ້ມແຂງຂອງແມ່ຍິງ. ລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ເພື່ອຍົກສູງຄວາມຮັບຮູ້ຂອງຄູໃນອະນາຄົດ ກ່ຽວກັບຄວາມສຳຄັນຂອງຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ. ຄຳໝັ້ນສັນຍາຂອງອົດສະຕຣາລີຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຢູ່ໃນ ສປປ ລາວ ພາຍໃຕ້ການເປັນຄູ່ຮ່ວມງານອັນຍາວນານຂອງພວກເຮົາກັບລັດຖະບານ ສປປ ລາວ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນເຂົ້າເຖິງການສຶກສາຊັ້ນປະຖົມທີ່ມີຄຸນນະພາບຢ່າງສະເໝີພາບ".



ກະຊວງສຶກສາທິການ ແລະ ກິລາ ຈັດພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມຣິກາ (USAID) ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ຫຼື ແຜນງານບີຄວາ.



